# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳ 06 ເດືອນຕົ້ນປີ 2020

ທີ່ນະຄອນຫຼວງວຽງຈັນ, ວັນທີ 30-31 ກໍລະກົດ 2020, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳ 06 ເດືອນຕົ້ນປີ 2020 ພາຍໃຕ້ການ ເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ, ໂດຍມີຄະນະອຳນວຍການ, ບັນດາທ່ານ ຄະນະພະແນກ, ຄະນະສູນຈາກສຳນັກງານໃຫຍ່, ຄະນະສາຂາໃນທົ່ວລະບົບ ທຄຕລ ພ້ອມດ້ວຍພະນັກງານກ່ຽວຂ້ອງທັງໝົດລວມ 55 ທ່ານ




ກອງປະຊຸມໄດ້ປະເມີນ ແລະ ວິເຄາະຜົນການດຳເນີນທຸລະກິດຂອງ ທຄຕລ ໄລຍະ 06 ເດືອນຕົ້ນປີ 2020 ແລະ ໄດ້ປຶກສາຫາລືກັນ ເພື່ອຫາວິທີແກ້ໄຂບັນຫາ ຂໍ້ຫຍຸ້ງຍາກຕ່າງໆ ໂດຍສະເພາະແມ່ນການແກ້ໄຂບັນດາຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19.

ໂດຍລວມແລ້ວເຫັນວ່າ ຜົນດຳເນີນງານໃນແຕ່ລະດ້ານ ທຄຕລ ສາມາດປະຕິບັດໄດ້ດີພໍສົມຄວນ ໃນໄລຍະ 06 ເດືອນຕົ້ນປີ ເມື່ອທຽບໃສ່ແຜນການປະຈຳປີ 2020. ແຕ່ກໍ່ຍັງມີບາງອັນທີ່ຍັງບໍ່ສາມາດປະຕິບັດໄດ້ຕາມແຜນການ ເນື່ອງຈາກສະພາບເສດຖະກິດພາຍໃນ ແລະ ຕ່າງປະເທດ ມີການສະລໍຕົວ.



ໃນທີ່ປະຊຸມ ບັນດາຜູ້ເຂົ້າຮ່ວມຍັງໄດ້ມີການແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ ໃນການບໍລິຫານວຽກງານ ເພື່ອໃຫ້ບັນລຸຄາດໝາຍໄປພ້ອມກັນ ບໍ່ວ່າຈະເປັນການຄຸ້ມຄອງບໍລິຫານ, ແນວທາງໃນການຂະຫຍາຍຖານລູກຄ້າເງິນຝາກ, ຂາຍຜະລິດຕະພັນ ແລະ ສຳຄັນທີ່ສຸດແມ່ນເອົາໃຈໃສ່ຕິດຕາມ ຄຸ້ມຄອງລູກຄ້າສິນເຊື່ອບໍ່ໃຫ້ມີບັນຫາ ພ້ອມກັນສູ້ຊົນໃຫ້ຜົນການດຳເນີນງານທ້າຍປີ 2020 ສາມາດມີຕົວເລກກຳໄລໄດ້ສູງຂຶ້ນ.



ກອງປະຊຸມ ໄດ້ຮັບທິດຊີ້ນໍາຈາກທ່ານຜູ້ອໍານວຍການໃຫຍ່ ແລະ ຄະນະອໍານວຍການ ທຄຕລ ໃນການປະຕິບັດງານ, ເນັ້ນໜັກໃຫ້ ບັນດາພະແນກການ ແລະ ສາຂາຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການບໍລິການຂອງຕົນ, ພະຍາຍາມລະດົມ ແລະ ໃຫ້ຂໍ້ມູນແກ່ລູກຄ້າໃຫ້ຫັນມາໃຊ້ຜະລິດຕະພັນເອເລັກໂທນິກໃຫ້ຫລາຍຂຶ້ນ ເພື່ອສ້າງຄວາມສະດວກໃຫ້ລູກຄ້າ ທັງເປັນການປະຕິບັດນະໂຍບາຍຫລຸດຜ່ອນການນໍາໃຊ້ເງິນສົດໃນສັງຄົມ ພ້ອມກັນນີ້ໃຫ້ເອົາໃຈໃສ່ວຽກງານກວດກາ ແລະ ໃຫ້ຄວາມສໍາຄັນຕໍ່ວຽກງານປ້ອງກັນປະກົດການຫຍໍ້ທໍ້ຕ່າງໆ.